# ເປັນຫຍັງຕ້ອງແມ່ນການແຂ່ງຂັນ ບານເຕະຈຽງຊູລີກ

ຄຶກຄື້ນມ່ວນຊື່ນທີ່ສຸດ! ໃນລະດູຮ້ອນປີນີ້, ການແຂ່ງຂັນເຕະບານຈຽງຊູລີກຄຶກຄື້ນມ່ວນຊື່ນທີ່ສຸດ! ປັດຈຸບັນ, ຈຳນວນຜູ້ເຂົ້າຊົມການແຂ່ງຂັນບານເຕະຢູ່ຕາມສະໜາມບານເຕະຂອງການແຂ່ງຂັນບານເຕະຈຽງຊູລີກ, ສະຖິຕິສູງສຸດໄດ້ບັນລຸເຖິງ 60,396 ຄົນ ເຊິ່ງໄດ້ສ້າງສະຖິຕິໃໝ່ຂອງຈຳນວນຜູ້ເຂົ້າຊົມການແຂ່ງຂັນບານເຕະແບບສະໝັກຫຼິ້ນໃນປະຫວັດສາດຂອງຈີນ. ຈຳນວນຜູ້ກົດເຂົ້າເບິ່ງວິດີໂອສັ້ນກ່ຽວກັບຫົວຂໍ້ "ການແຂ່ງຂັນບານເຕະຈຽງຊູລີກ" ຢູ່ຕາມແອັບຕິກຕ໊ອກສື່ສັງຄົມອອນລາຍພາຍໃນປະເທດຈີນ ມີຫຼາຍກວ່າ 20 ຕື້ຄັ້ງ. ການແຂ່ງຂັນບານເຕະລະຫວ່າງຕົວເມືອງຕ່າງໆຂອງແຂວງຈຽງຊູໄດ້ລື່ນກາຍການແຂ່ງຂັນກິລາທຳມະດາ ຈົນກາຍເປັນ "ກິດຈະກຳທີ່ໜ້າອັດສະຈັນ" ໃນຂົງເຂດກິລາ, ວັດທະນະທຳ, ທ່ອງທ່ຽວ ແລະ ເສດຖະກິດຂອງຈີນ.

## ການແຂ່ງຂັນບານເຕະຢ່າງມ່ວນຊື່ນໂດຍມີປະຊາຊົນເຂົ້າຮ່ວມຢ່າງຫຼວງຫຼາຍ

ເປັນຫຍັງການແຂ່ງຂັນບານເຕະຈຽງຊູລີກ ຈຶ່ງໄດ້ຮັບຄວາມນິຍົມຫຼາຍປານນີ້? ຄຳຕອບກໍແມ່ນ: ການແຂ່ງຂັນບານເຕະດັ່ງກ່າວຍິນດີຕ້ອນຮັບປະຊາຊົນເຂົ້າຮ່ວມຢ່າງຫຼວງຫຼາຍ ແລະ ກິລາບານເຕະເຕັມໄປດ້ວຍຄວາມເບີກບານມ່ວນຊື່ນ.

ແຂວງຈຽງຊູ ປະກອບດ້ວຍ 13 ນະຄອນ ໂດຍມີທີມບານເຕະຈາກ 13 ນະຄອນມາເຂົ້າຮ່ວມການແຂ່ງຂັນ ຈຶ່ງເຮັດໃຫ້ປະຊາຊົນໃນແຕ່ລະນະຄອນໃຫ້ການສະໜັບສະໜູນທີມບານເຕະນະຄອນຂອງຕົນເປັນຢ່າງດີ ແລະ ໄດ້ດຶງດູດຜູ້ຕິດຕາມ ຫຼື ແຟນບານໃໝ່ເຂົ້າມາຊົມການແຂ່ງຂັນເປັນຈຳນວນຫຼວງຫຼາຍ. ນອກນີ້, ປີ້ເຂົ້າຊົມການແຂ່ງຂັນບານເຕະກໍບໍ່ແພງ, ລະບົບການຄົມມະນາຄົມທີ່ສະດວກສະບາຍ ແລະ ການຈັດສັນການແຂ່ງຂັນບານເຕະໃນມື້ບຸນ ແລະ ວັນພັກຕ່າງໆ ໄດ້ດຶງດູດປະຊາຊົນເຂົ້າມາຊົມການແຂ່ງຂັນເປັນຈຳນວນຫຼວງຫຼາຍ.

ສ່ວນນັກກິລາເຕະບານຈຳນວນ 516 ຄົນທີ່ເຂົ້າຮ່ວມການແຂ່ງຂັນ ມີອາຍຸລະຫວ່າງ 16 ຫາ 40 ປີ, ນອກຈາກນັກກິລາເຕະບານອາຊີບ 29 ຄົນ, ທີ່ເຫຼືອ 65% ແມ່ນນັກກິລາເຕະບານສະໝັກຫຼິ້ນ, ເຂົາເຈົ້າສ່ວນຫຼາຍແມ່ນອາຈານສອນ, ວິສະວະກອນ, ນັກທຸລະກິດ ແລະ ອື່ນໆ. ສ່ວນຫຼາຍແມ່ນເຮັດວຽກ ຫຼື ເຂົ້າການໃນຕອນກາງເວັນ ແລະ ຝຶກຊ້ອມເຕັກນິກການແຂ່ງຂັນໃນຕອນກາງຄືນ, ມີບາງຄົນກິນແຕ່ໝາກແຕງ ເພື່ອຫຼຸດນ້ຳໜັກ ແລະ ມີບາງຄົນຂັບລົດຕັ້ງ 3 ຊົ່ວໂມງ ເພື່ອໄປເຂົ້າຮ່ວມການຝຶກຊ້ອມຢູ່ເມືອງອື່ນ.

ການແຂ່ງຂັນບານເຕະຈຽງຊູລີກ ໄດ້ກຳນົດຢ່າງຈະແຈ້ງວ່າ: ນັກກິລາເຕະບານມືອາຊີບໃນທີມຂອງແຕ່ລະນະຄອນແມ່ນບໍ່ໃຫ້ເກີນ 3 ຄົນ. ເມື່ອນັກກິລາເຕະບານສະໝັກຫຼິ້ນສາມາດເປັນພະເອກໃນເດີ່ນບານ, ຄະແນນຈະບໍ່ເປັນມາດຕະຖານພຽງໜຶ່ງດຽວໃນການຕີລາຄາການແຂ່ງຂັນບານເຕະ, ເມື່ອນັກກິລາເຕະບານທັງຫຼາຍສຸມໃສ່ການແຂ່ງຂັນແບບເອົາຈິງເອົາຈັງ, ການແຂ່ງຂັນບານເຕະແບບນີ້ຍ່ອມຈະໄດ້ຮັບຄວາມນິຍົມຊົມຊອບຈາກຜູ້ຊົມທັງຫຼາຍ.

ວັນທີ 29 ມິຖຸນາຜ່ານມານີ້, ການແຂ່ງຂັນເຕະບານລະຫວ່າງທີມຊູໂຈ່ວ ແລະທີມຢ່າງໂຈ່ວ, ທ້າວ ເຄົາເສິງ ນັກຮຽນຊັ້ນ ມ 5 ຈາກໂຮງຮຽນມັດທະຍົມເມືອງອູຊຽນ ນະຄອນຊູໂຈ່ວ ທີ່ມີອາຍຸ 17 ປີ ເກົ່າອີ່ຫຼີ. ລາວສາມາດເຕະເຂົ້າປະຕູໄດ້ໃນເວລາການແຂ່ງຂັນພຽງ 1 ນາທີ 17 ວິນາທີ ເຊິ່ງໄດ້ສ້າງສະຖິຕິເຕະບານເຂົ້າປະຕູໄວສຸດໃນປະຫວັດສາດການແຂ່ງຂັນເຕະບານຈຽງຊູລີກ. ນອກນີ້, ລາວສາມາດເຕະເຂົ້າອີກໜຶ່ງປະຕູໃນນາທີທີ 77 ເຮັດໃຫ້ລາວກາຍເປັນນັກກິລາເຕະບານດີເດັ່ນຂອງທີມຊູໂຈ່ວ ພາຍຫຼັງເອົາຊະນະຄູ່ແຂ່ງ 3 ປະຕູ ຕໍ່ 0.

ບໍ່ພຽງແຕ່ ທ້າວ ເຄົາເສິງ ພຽງຄົນດຽວເທົ່ານັ້ນ. ຄຽງຄູ່ກັບການແຂ່ງຂັນບານເຕະຈຽງຊູລີກດຳເນີນໄປຢ່າງຄຶກຄື້ນ, ນັກກິລາທີ່ເປັນນັກສຶກສາ ແລະ ນັກຮຽນມັດທະຍົມກວມ 30% ຂອງນັກກິລາທີ່ເຂົ້າຮ່ວມການແຂ່ງຂັນໃນຄັ້ງນີ້, ຊຶ່ງໄດ້ດຶງດູດຄວາມສົນໃຈຈາກຄົນທັງຫຼາຍ. ທີມຊູໂຈ່ວ ມີນັກກິລາ 6 ຄົນ ເຊິ່ງລວມທັງ ທ້າວ ເຄົາເສິງ ລ້ວນແຕ່ມາຈາກທີມບານເຕະມັດທະຍົມເມືອງອູຊຽນ, ເຂົາເຈົ້າໄດ້ເຮັດໃຫ້ນັກຮຽນທັງຫຼາຍພາກັນຫັນມາສົນໃຈກິລາບານເຕະນັບມື້ນັບຫຼາຍຂຶ້ນ ແລະ ໄດ້ກາຍເປັນຕົວແບບ ຫຼື ໄອດໍຂອງນັກຮຽນທັງຫຼາຍ.

ນັກກິລາບານເຕະທີ່ເຂົ້າຮ່ວມການແຂ່ງຂັນບານເຕະຈຽງຊູລີກ 16 ຄົນ ມາຈາກໂຮງຮຽນມັດທະຍົມຢູຮວາທາວ ນະຄອນນານກິງ, ທ່ານ ອູເວີຍ ທີ່ເປັນຄູຝຶກຂອງໂຮງຮຽນແຫ່ງນີ້ຮູ້ສຶກພາກພູມໃຈຫຼາຍຕໍ່ເລື່ອງນີ້. ທ່ານກ່າວວ່າ: ເຖິງວ່ານັກຮຽນເຫຼົ່ານີ້ໄດ້ຮຽນຈົບຫຼາຍປີ ແລະ ໄປເຮັດວຽກໃນຂະແໜງການຕ່າງໆແລ້ວກໍຕາມ, ແຕ່ທຸກຄົນລ້ວນແຕ່ໄດ້ສູ້ຊົນເພື່ອບ້ານເມືອງ ແລະ ຄວາມຝັນຂອງຕົນໃນການແຂ່ງຂັນບານເຕະ. ທ່ານເຫັນວ່າ: "ນັກກິລາເຕະບານພະຍາຍາມສູ້ຊົນໃນເວລາຢູ່ສະໜາມແຂ່ງຂັນ ກໍຄືດັ່ງທຸກຄົນໄດ້ສູ້ຊົນເພື່ອຊີວິດຂອງຕົນ." ທັງໝົດນີ້ຈະເຮັດໃຫ້ປະຊາຊົນທຳມະດາຍິ່ງໃຫ້ຄວາມສົນໃຈເຂົ້າມາຊົມການແຂ່ງຂັນກິລາປະເພດນີ້.

## ເຮັດໃຫ້ນະຄອນຕ່າງໆໄດ້ແຂ່ງຂັນອຸດສາຫະກຳການຜະລິດທີ່ມີທ່າແຮງຂອງຕົນ

ການແຂ່ງຂັນບານເຕະຈຽງຊູລີກ ມີບັນຍາກາດນັບມື້ນັບຄຶກຄື້ນມ່ວນຊື່ນ ເຮັດໃຫ້ນະຄອນຕ່າງໆໄດ້ແຂ່ງຂັນອຸດສາຫະກຳການຜະລິດທີ່ມີທ່າແຮງຂອງຕົນ. ຍ້ອນວ່າ 13 ນະຄອນພາຍໃນແຂວງຈຽງຊູໄດ້ພັດທະນາຢ່າງດຸນດ່ຽງກັນ ແລະ ຕ່າງມີອຸດສາຫະກຳທີ່ເປັນທ່າແຮງຂອງຕົນ. ຕົວຢ່າງ: ວິດີໂອກ່ຽວກັບການແຂ່ງຂັນ ລວມຍອດຜະລິດຕະພັນພາຍໃນ ຫຼື GDP ໃນປີ 2024 ລະຫວ່າງນະຄອນຊູໂຈ່ວທີ່ບັນລຸ 2,670 ຕື້ຢວນ ແລະ ນະຄອນອູຊີທີ່ບັນລຸ 1,630 ຕື້ຢວນ ໄດ້ເຮັດໃຫ້ມີຜູ້ກົດເຂົ້າຊົມຫຼາຍກວ່າ 120 ລ້ານເທື່ອ.

ການແຂ່ງຂັນກັນແບບນີ້ຍັງມີຫຼາຍຢ່າງ ເຊັ່ນ: ການແຂ່ງຂັນພະລັງງານໃໝ່ລະຫວ່າງໝໍ້ໄຟ ຫຼື ແບດເຕີຣີຂອງນະຄອນສາງໂຈ່ວ ກັບການຜະລິດໄຟຟ້າດ້ວຍພະລັງງານລົມຂອງນະຄອນແຢນເສິງ, ການແຂ່ງຂັນແຜ່ນຊິບລະຫວ່າງການຜະລິດແຜ່ນຊິບຂອງນະຄອນອູຊີ ກັບການອອກແບບແຜ່ນຊິບຂອງນະຄອນນານກິງ, ການແຂ່ງຂັນອຸດສາຫະກຳຜະລິດຢາ ລະຫວ່າງນະຄອນທາຍໂຈ່ວ ກັບນະຄອນຫຼຽນຢຸນກາງ, ການແຂ່ງຂັນຊາຕອນເຂົ້າລະຫວ່າງນະຄອນຢ່າງໂຈ່ວ ກັບນະຄອນທາຍໂຈ່ວ ແລະ ອື່ນໆ, ຊາວເນັດຈະສາມາດຄົ້ນພົບຈຸດແຂ່ງຂັນລະຫວ່າງສອງນະຄອນທີ່ເຂົ້າຮ່ວມການແຂ່ງຂັນບານເຕະ.

ແຂວງຈຽງຊູ ມີເຄືອຂ່າຍດ້ານຄົມມະນາຄົມທີ່ສະດວກສະບາຍ ເຮັດໃຫ້ຜູ້ທີ່ຈະເດີນທາງໄປຊົມການແຂ່ງຂັນບານເຕະສາມາດເດີນທາງໄປສະໜາມບານເຕະໄດ້ພາຍໃນເວລາໜຶ່ງມື້ ໂດຍຜ່ານການຂີ່ລົດໄຟຄວາມໄວສູງ ຫຼື ຂີ່ເຮືອບິນ, ນອກນີ້, ຍັງມີສູນກິລາຂະໜາດໃຫຍ່ ແລະ ລະບົບຈັດການແຂ່ງຂັນແບບສະໝັກຫຼິ້ນທີ່ສົມບູນ. ກ່ອນການແຂ່ງຂັນ, 13 ນະຄອນຍັງຮັກແພງກັນປານອ້າຍນ້ອງກັນ; ແຕ່ເມື່ອການແຂ່ງຂັນບານເຕະເລີ່ມຕົ້ນແລ້ວ, ຄວາມຮັກແພງແບບນີ້ໄດ້ຈາງຫາຍໄປທັນທີ, ມີແຕ່ການແຂ່ງຂັນບານເຕະທີ່ດຸເດືອດເທົ່ານັ້ນ. ການປ່ຽນແປງແບບນີ້ກໍໄດ້ດຶງດູດຊາວເນັດທັງຫຼາຍສົນໃຈນຳການແຂ່ງຂັນບານເຕະຈຽງຊູລີກ ເປັນຢ່າງຍິ່ງ ແລະ ໄດ້ເຮັດໃຫ້ການແຂ່ງຂັນບານເຕະຈຽງຊູລີກກາຍເປັນຫົວຂໍ້ຈຸດເດັ່ນໃນອິນເຕີເນັດ.

ການແຂ່ງຂັນເຕະບານຈຽງຊູລີກ ນັບມື້ນັບມີຊື່ສຽງໂດ່ງດັງ. ນາງ ຝາງຮາວ ຜູ້ສ້າງຕັ້ງບໍລິສັດຊານົມຈົວຊິນຝາງ ນະຄອນຫຼຽນຢຸນກາງ ທີ່ເກີດໃນຊຸມປີ 1990 ໄດ້ມາດຳເນີນທຸລະກິດຢູ່ນະຄອນຫຼຽນຢຸນກາງໃນປີ 2019, ປັດຈຸບັນໄດ້ເປີດຮ້ານຢູ່ນະຄອນຫຼຽນຢຸນກາງແລ້ວ 6 ແຫ່ງ ຍ້ອນວ່າ ແຟນບານເຄີຍເວົ້າວ່າ "ຢາກໃຫ້ຍີ່ຫໍ້ຫຼຽນຢຸນກາງມາສະໜັບສະໜູນການແຂ່ງຂັນບານເຕະ" ເທົ່ານັ້ນ, ນາງໄດ້ສະໜັບສະໜູນການແຂ່ງຂັນບານເຕະຂອງທີມຫຼຽນຢຸນກາງ 5 ນັດ ຕີເປັນມູນຄ່າ 30.000 ຢວນ. ຄຽງຄູ່ກັບການແຂ່ງຂັນບານເຕະດຳເນີນຕໍ່ໄປ, ແຟນບານຫຼາຍຄົນທີ່ເປັນນັກທຸລະກິດນ້ອຍທີ່ຄ້າຍຄືກັບບໍລິສັດຊານົມຈົວຊິນຝາງ ກໍໄດ້ທະຍອຍກັນມາສະໜັບສະໜູນການແຂ່ງຂັນບານເຕະຂອງທີມນະຄອນຕົນນັບມື້ນັບຫຼາຍຂຶ້ນ.

ຕາມສະຖິຕິ, ວິສາຫະກິດທີ່ສະໜັບສະໜູນການແຂ່ງຂັນບານເຕະຈຽງຊູລີກມາຈາກຂົງເຂດການທະນາຄານ, ວິທະຍາສາດເຕັກໂນໂລຊີ, ລົດ, ຮ້ານອາຫານ, ຢາ ແລະ ຂົງເຂດອື່ນໆ. ຍີ່ຫໍ້ໃໝ່ທີ່ມາສະໜັບສະໜູນກໍເພີ່ມຂຶ້ນເລື້ອຍໆ. ຕາມຄາດຄະເນ: ໝົດລະດູການແຂ່ງຂັນຈະໄດ້ຮັບການສະໜັບສະໜູນລວມທັງໝົດຫຼາຍກວ່າ 300 ລ້ານຢວນ ແລະ ສະເລ່ຍແລ້ວ, ແຕ່ລະນະຄອນຈະມີລາຍຮັບເພີ່ມຂຶ້ນຫຼາຍກວ່າ 20 ລ້ານຢວນ.



**ເນື້ອໃນເພີ່ມເຕີມ:**

ປີ 2024, GDP ຂອງແຂວງຈຽງຊູໄດ້ບັນລຸເຖິງ 13,700 ຕື້ຢວນ, GDP ສະເລ່ຍຕໍ່ຫົວຄົນຫຼາຍກວ່າ 160,000 ຢວນ; ນັບມາຮອດທ້າຍປີ 2024, ທົ່ວແຂວງມີສະໜາມກິລາທັງໝົດ 363,700 ກວ່າແຫ່ງ, ເນື້ອທີ່ຫຼິ້ນກິລາສະເລ່ຍຕໍ່ຫົວຄົນມີເຖິງ 4,46 ຕາແມັດ, ສະໜາມເຕະບານ, ເດີ່ນບານບ້ວງ ແລະ ເດີ່ນບານສົ່ງມີເຖິງ 81,800 ກວ່າແຫ່ງ ໄດ້ສ້າງໂຮງຮຽນສອນເຕະບານ 2,000 ກວ່າແຫ່ງ.

ການແຂ່ງຂັນບານເຕະລະຫວ່າງນະຄອນຕ່າງໆຂອງແຂວງຈຽງຊູຄັ້ງທຳອິດໄດ້ເລີ່ມຂຶ້ນຢ່າງເປັນທາງການໃນວັນທີ 10 ພຶດສະພາ ປີ 2025 ແລະ ຈະດຳເນີນເປັນເວລາ 7 ເດືອນ, ການແຂ່ງຂັນຮອບຊິງຊະນະເລີດຈະຈັດຂຶ້ນໃນວັນທີ 2 ພະຈິກປີນີ້. 13 ນະຄອນພາຍໃນແຂວງຈຽງຊູຕ່າງໄດ້ສົ່ງທີມບານເຕະຂອງຕົນເຂົ້າຮ່ວມການແຂ່ງຂັນ, 13 ນະຄອນຜັດປ່ຽນກັນເປັນເຈົ້າພາບຈັດການແຂ່ງຂັນ, ການແຂ່ງຂັນແບ່ງເປັນສອງໄລຍະຄື: ໄລຍະການແຂ່ງຂັນທຳມະດາ ແລະ ໄລຍະການແຂ່ງຂັນປັດເຂ່ຍ ຫຼື ເສຍແລ້ວຕົກຮອບເລີຍ ໂດຍຈະມີການແຂ່ງຂັນທັງໝົດ 85 ນັດ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)






ynzhanba@163.com
laos.yunnangateway.com